# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 3 ມັງກອນ 2010 (1-3-2010)**

---

## ການຄຸ້ນຄິດກັບຄວາມໝາຍຂອງຊີວິດ

**ຂໍ້ພຣະຄັມພີໃນບົດຮຽນ:** ປັນຍາຈານ 1:1-11;12:13-14

**ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ຄົ້ນພົບວ່າພຣະເຈົ້າເປັນແຫຼ່ງທີ່ມາຂອງຄວາມໝາຍຊີວິດ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ**

ບົດຮຽນນີ້ແມ່ນກ່ຽວກັບພວກຄົນທີ່ປະເຊີນກັບການຕັດສິນໃຈບໍ່ໄດ້ໃນການຫາຄວາມໝາຍສະເພາະເຈາະຈົງອັນແທ້ຈິງຂອງຊີວິດພວກເຂົາ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ**

ຄົນເຮົາມີຄວາມຕ້ອງການຢາກຫຼີກລ້ຽງຈາກການເບິ່ງສິ່ງຕ່າງໆ ໃນແງ່ຮ້າຍແລະຈາກການເຍາະເຍີ້ຍກັບສິ່ງທີ່ລົ້ມລຸກຄຸກຄານຊຶ່ງໄດ້ຂຽນໄວ້ໃນພຣະທັມປັນຍາຈານ. ເມື່ອຄົນເຮົາຄົ້ນພົບວ່າຄວາມໝາຍຂອງຊີວິດມັນເລີ້ມຕົ້ນແລະຈົບລົງກັບພຣະເຈົ້າ, ພວກເຂົາກໍພົບເປົ້າໝາຍໃນຊີວິດ.

ນັກຕລົກຄົນນຶ່ງຊື່ ແຈຣີ ຊາຍຟຸວ ໄດ້ລົມທຽບຊີວິດໃສ່ກັບຊິງຊ້າ(ເຄື່ອງຂີ່ທີ່ຂຶ້ນໆລົງໆ) ແລະໄດ້ສລຸບໄວ້ວ່າເປົ້າໝາຍຂອງຊີວິດມັນເຄື່ອນຍ້າຍໄປເລື້ອຍໆ. ຄຳເວົ້ານີ້ແມ່ນຂອງຊາຍຜູ້ນຶ່ງຊຶ່ງເປັນຜູ້ຊ່ວຍປະດິດລາຍການໂດ່ງດັງໃນໂທຣະທັດເຣື່ອງນຶ່ງທີ່ມີຊື່ວ່າ"ການສະແດງກ່ຽວກັບການບໍ່ມີຫຍັງ" ຊີວິດນີ້ແມ່ນກ່ຽວກັບເຣື່ອງບໍ່ມີຫຍັງບໍ່? ມັນມີເປົ້າໝາຍຫຍັງບໍ່? ຄວາມຈິງແລ້ວຊີວິດນີ້ມັນມີການເຄື່ອນໄຫວໄປໃສບໍ່? ບົດເລີ້ມຕົ້ນຂອງພຣະທັມປັນຍາຈານກ່າວກ່ຽວກັບຄຳຖາມດຽວກັນ, ໃນບົດຮຽນນີ້, ພວກເຮົາຈະພິສູດແຫຼ່ງທີ່ມາຂອງຄວາມໝາຍຊີວິດກໍຄືຕົວພຣະເຈົ້າເອງ.

## <u>ສຶກສາພຣະຄັມພີ</u>

1. **<u>ຊີວິດນີ້ມີຄວາມໝາຍບໍ່?</u>** (ປັນຍາຈານ 1:1-7)

ເມື່ອບໍ່ດົນມານີ້ທ່ານສາມາດສັງເກດເບິ່ງທຳນຽມການສລອງຕ້ອນຮັບປີໃໝ່, ດັ່ງເຊັ່ນມີການຮ້ອງເພງທີ່ເຄີຍຮ້ອງທຸກປີ. ເບື້ອງຫຼັງຂອງການກະທຳແບບນີ້ກໍຫວັງວ່າປີນີ້ຈະໄດ້ກວ່າປີກາຍ.

ພຣະທັມປັນຍາຈານໄດ້ຖືກຂຽນຂຶ້ນໂດຍກະສັດໂຊໂລໂມນ, **ລູກຊາຍຂອງກະສັດດາວິດແຫ່ງກຸງເຢຣູຊາເລັມ. ເປັນຄຣູສອນ,** ເປັນຜູ້ແຕ່ງພຣະທັມປັນຍາຈານ, ໄດ້ເຫັນວ່າຈະຫາຄວາມທ່ຽງໝັ້ນບໍ່ມີເລີຍໃນຊີວິດ. ສິ່ງທີ່ບໍ່ຍືນນານດັ່ງເຊັ່ນ"ການທັນໃຈ" ຫຼື "ນ້ຳໝອກ" ແລະຊີ້ໃຫ້ເຫັນຄວາມຜັນປ່ຽນທັມມະຊາດຂອງຊີວິດ. ເກືອບວ່າທຸກຢ່າງທີ່ພວກເຮົາປະສົບພົບພໍ້ແລະຮູ້ຈັກໃນໂລກນີ້ບໍ່ມີອັນໃດຖາວອນ.

ເພງດັງຂອງປີ 1970ທີ່ມີຊື່ວ່າ"ຂີ້ຝຸ່ນໃນກາງລົມ" ຊ່ວຍນຳໃຫ້ເຫັນຄວາມຄິດແນວນີ້. ເນື້ອເພງບອກວ່າ ທຸກໆສິ່ງມັນຜ່ານກາຍໄປບໍ່ມີອັນໃດຕັ້ງຢູ່ຖາວອນເປັນນິດ. ພວກເຖິງກະສຽນຫຼາຍຄົນມີຄຳຖາມກັບຄວາມໝາຍຂອງຊີວິດ, ຄິດງໍ້ຕໍ່ຊີວິດຂອງພວກເຂົາວ່າຈະທ່ຽງໝັ້ນຊ່ຳໃດ-ຫຼືເປັນຂີ້ຝຸ່ນກາງລົມ. ນີ້ກໍສາມາດກາຍເປັນເຄື່ອງຊ່ວຍໃຫ້ຊອກຫາພຣະເຈົ້າແລະມາເຖິງການມອງເຫັນວ່າພຣະເຢຊູຄຣິດແມ່ນຄວາມໝາຍອັນແທ້ຈິງຂອງຊີວິດ.

ໜ້າທີ່ການງານຂອງຜູ້ໃດທີ່ມີຄວາມໝາຍ, ມັນຄວນຈະແມ່ນຂອງກະສັດ. ເຖິງປານນັ້ນໂຊໂລໂມນຍັງຄິດບໍ່ອອກວ່າທີ່ມະນຸດທຳງານໜັກກາງແດດ ເຂົາໄດ້ປະໂຍດອັນໃດຈາກງານທີ່ເຂົາທຳນັ້ນ. ມັນເປັນການສັງເກດທີ່ຖືກຕ້ອງທີ່ພວກເຮົາທຸ້ມເທຢ່າງຫຼວງຫຼາຍໃສ່ການງານນັ້ນແລະໄດ້ປະໂຍດແຕ່ພຽງເລັກນ້ອຍຕອບແທນ.

ບາງທີເຫດຜົນອັນນຶ່ງທີ່ບາງຄັ້ງຊີວິດເບິ່ງເໝືອນວ່າບໍ່ທ່ຽງໝັ້ນເພາະວ່າພວກເຮົາລົງທຶນກັບສິ່ງຂອງເຫຼົ່ານັ້ນທີ່ຢູ່ໃຕ້ດວງຕາເວັນແຕ່ພຽງເທົ່ານັ້ນ. ເພື່ອຊີວິດຈະມີຄວາມໝາຍທີ່ຖືກຕ້ອງ, ມັນຈະຕ້ອງມີການປັບຕົວໃໝ່ຈາກ"ການດີໄປສູ່ການດີທີ່ສຸດ."ຂນະທີ່ເຮັດການໜັກໜ່ວງແລະເຫັນໝາກຜົນຂອງມັນ ນັ້ນແມ່ນການດີ, ເຮັດການໜັກໜ່ວງເພື່ອຂຍາຍຣາຊອານາຈັກຂອງພຣະເຈົ້າແລະມີສ່ວນກັບສິ່ງຕລອດໄປເປັນນິດ ນັ້ນແມ່ນການດີທີ່ສຸດ.

ສ່ວນນຶ່ງຂອງການລົ້ມລຸກຄຸກຄານກັບຄວາມໝາຍຊີວິດຂອງໂຊໂລໂມນແມ່ນເບິ່ງເໝືອນວ່າເປັນສ່ວນຂອງການໝູນວຽນທີ່ບໍ່ມີບ່ອນສິ້ນສຸດຂອງທັມມະຊາດດັ່ງເຊັ່ນ**ຕາເວັນຂຶ້ນແລະຕາເວັນຕົກ**. ພວກເຮົາສາມາດນັບການຂຶ້ນຂອງດວງຕາເວັນໄດ້ແຕ່ວ່າກໍບໍ່ແນ່ນອນວ່າຈະໄດ້ຢູ່ຕໍ່ໄປເພື່ອຈະນັບໃນຄັ້ງຕໍ່ໄປ. ໂຊໂລໂມນໄດ້ສັງເກດເຫັນວ່າຊີວິດເບິ່ງເໝືອນວ່າມັນບໍ່ໄປທາງໃດແຕ່ວ່າມັນສືບຕໍ່ໝຸນວຽນຕາມຄວາມບໍ່ໝັ້ນທ່ຽງ.

## 2. <u>**ຊີວິດນີ້ຈ່ອງດຶງທ່ານບໍ່?**</u> (ປັນຍາຈານ 1:8-11)

ດັ່ງທີ່ໄດ້ບັນລະຍາຍມາແລ້ວກ່ຽວກັບທັມມະຊາດຂອງຊີວິດ, ໂຊໂລໂມນກໍໄດ້ຫັນມາເວົ້າກ່ຽວກັບການເກີດມີມາຂອງມະນຸດຊາດ, ທີ່ເປີດໃຫ້ເຫັນປະສົບການຂອງມະນຸດໃນແວ່ນຂອງທັມມະຊາດ. ລາວໄດ້ເຫັນການເຮັດວຽກໜັກຂອງຊີວິດຊຶ່ງເປັນສິ່ງ**ໜ້າເບື່ອ**. ມີຫຼາຍຄົນໃນສມັຍນີ້ຄົງຈະເຫັນພ້ອມ- ແຕ່ສ່ວນຫຼາຍພວກເຂົາກໍບໍ່ເວົ້າເຖິງມັນ, ຫຼື **ບໍ່ສາມາດ**ກ່າວກ່ຽວກັບມັນ.

ເມື່ອຊີວິດມີການທ້າທາຍ, ພວກເຮົາກໍພົບຄວາມບໍ່ເພິ່ງພໍໃຈຫຼືຄັບເຕັມ. ຄືກັນກັບນ້ຳທະເລ, ພວກເຮົາຖືກລ້ຽງເກືອຢ່າງຕໍ່ເນື່ອງແຕ່ວ່າກໍບໍ່ເຄີຍເຕັມຈັກເທື່ອ. ອີກບໍ່ດົນພວກເຮົາກໍຈະເປັນເໝືອນດັ່ງທີ່ໂຊໂລໂມນໄດ້ຂຽນເອົາໄວ້:**ສິ່ງທີ່ເປັນຂຶ້ນແລ້ວຄືສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ທຳກັນແລ້ວ ຄືສິ່ງທີ່ຈະຕ້ອງທຳກັນອີກ**. ຊີວິດກາຍເປັນເໝືອນຝູງມ້າໝຸນເປັນວົງວຽນທີ່ຫາຄວາມລົ້ນເລີງບໍ່ມີເລີຍ.

ທ່ານເຄີຍໄດ້ຍິນບາງຄົນເວົ້າດ້ວຍສຽງອິດເມື່ອຍຫຼືຂົມຂື່ນແບບນີ້ບໍ່, "ບໍ່ມີຫຍັງປ່ຽນແປງເລີຍ"? ແມ່ນຫຍັງຄືຄວາມໝາຍທີ່ໂຊໂລໂມນເວົ້າວ່າ **ບໍ່ມີສິ່ງໃດໃຫມ່ພາຍໃຕ້ດວງອາທິດ**? ມີເຫດການອັນໃດຂອງຊີວິດທ່ານໃນປີແລ້ວນີ້ທີ່ສາມາດພັນລະນາວ່າເປັນອັນໃໝ່ອັນແທ້ຈິງ? ຖ້າຢ່າງນັ້ນ, ເຄື່ອງໃຊ້ຂອງສອຍໃໝ່ຂອງພວກເຮົາທີ່ແລ່ນດ້ວຍລະບົບໄຟຟ້າອັນທັນສມັຍບໍ່ຮ້ອງວ່າເປັນສິ່ງໃໝ່ໆບໍ່? ຂ້າພະເຈົ້າສາມາດມີເຄື່ອງໃຊ້ທີ່ທັນສມັຍໃນການຊ່ວຍວາງແຜນຂອງການເຮັດວຽກແຕ່ວ່າມັນກໍບໍ່ໄດ້ປ່ຽນຄວາມເປັນຈິງທີ່ວ່າເວລາທີ່ມີຢູ່ໃນໂລກນີ້ມີຂອບເຂດຈຳກັດ. ຂ້າພະເຈົ້າສາມາດມີຄອມພິວເຕີລຸ້ນທັນສມັຍລ້າສຸດທີ່ສາມາດເວົ້າລົມກັບຄອບຄົວຢູ່ທີ່ວປະເທດໄດ້ແຕ່ວ່າມັນກໍຍັງບໍ່ປ່ຽນເຫດການທີ່ຂ້າພະເຈົ້າສາມາດຢູ່ທີ່ສະຖານທີ່ດຽວໃນເວລາດຽວເທົ່ານັ້ນ.

ພາສິດເດີມກ່າວໄວ້ວ່າ"ຫຼາຍຢ່າງປ່ຽນແປງ, ຫຼາຍຢ່າງແທ່ງກັບຄືອັນເກົ່າ." ນີ້ແມ່ນສິ່ງທີ່ໂຊໂລໂມນກ່າວເຖິງບໍ່ແມ່ນຫຼື? ລາວຮູ້ຈັກເຍາະເຍີ້ຍໄດ້ຢ່າງໃດ? ບາງທີລາວໃຊ້ເພື່ອດຶງດູດຄວາມສົນໃຈຂອງພວກຜູ້ຟັງ. ມີບາງພວກໃຫ້ຄວາມເຫັນວ່າລາວໃຊ້ເຮື່ອງທີ່ຮຸນແຮງເພື່ອຕຽມພວກທີ່ອ່ານໄປສູ່ສິ່ງທີ່ຍິ່ງໃຫຍ່ກວ່າ. ແລະມັນມີບາງສິ່ງທີ່ຍິ່ງໃຫຍ່ກວ່າ.

ມີຫຼາຍຄົນຊອກຫາຊີວິດເພື່ອບັນເທີງພວກເຂົາ, ແລະນຳສິ່ງຕື່ນເຕັ້ນໃໝ່ໆມາໃຫ້ເຂົາຢູ່ຕລອດ. ແທນທີ່ຈະຊອກຫາຄວາມໝາຍໃນຊີວິດ, ພວກເຮົາຕ້ອງຊອກຫາຄວາມໝາຍຊີວິດໃນພຣະເຈົ້າ. ຊີວິດທີ່ຍຶດໝັ້ນຢູ່ໃນພຣະຄຣິດບໍ່ຈຳເປັນຕ້ອງໃຊ້ວັດຖຸສິ່ງຂອງໃດໆເພື່ອເສີມສ້າງໃຫ້ມັນມີຊີວິດຊີວາ.

ໂຊໂລໂມນຍັງເວົ້າລວມໄປເຖິງສິ່ງທີ່ມີຄຸນຄ່າອັນຍາວນານ. **ແມ່ນຫຍັງເກີດຂຶ້ນກັບພວກທີ່ເປັນຢູ່ກ່ອນພວກເຮົາ**? ພວກເຮົາສາມາດເວົ້າໄດ້ບໍ່ວ່າບໍ່ມີຄວາມຊົງຈຳຫຍັງໝົດກັບພວກຄົນດັງໃນປວັດສາດເຊັ່ນ ມາຣຕິນ ລູເຕີ, ອັບຣາແຮມລິງກອນ, ແລະວິນສຕັນເຊີຈຽວ? ບໍ່ມີໃຜຮູ້ຈັກວ່າອະນາຄົດຈະນຳຫຍັງມາໃຫ້, ຖ້າຫາກວ່າພຣະຄຣິດຫາກຊັກຊ້າໃນການສະເດັດກັບມາຂອງພຣະອົງ? ມັນກໍຈະເປັນດັ່ງນັ້ນ, ຖ້າຫາກໃຫ້ເວລາພຽງພໍ, ແມ້ກະທັ້ງພວກທີ່ພວກເຮົາຈຳໄດ້ໃນປວັດສາດຈະຜ່ານເຂົ້າສູ່ຄວາມມືດມົນຫຼື? ແຕ່ວ່າ, ສຳລັບພວກທີ່ຈົດຈໍ່ຢາກເສີມຂຍາຍຣາຊອານາຈັກຂອງພຣະເຈົ້າໃນໂລກນີ້ຈະພົບຄວາມຊົງຈຳອັນຕລອດໄປເປັນນິດຂອງພຣະເຈົ້າ. ຣາຊອານາຈັກຂອງພຣະອົງຕັ້ງຢູ່ເປັນນິດແລະພວກທີ່ທຳງານຈະປະເຄື່ອງໝາຍໄວ້ເກີນກວ່າການບັນທຶກໃນປວັດສາດ.

## 3. <u>**ແມ່ນຫຍັງຄືຄຳຕອບ**</u> (ປັນຍາຈານ 12:13-14)

ໂຊໂລໂມນຕັ້ງຄຳຖາມຫຼາຍຂໍ້ຂນະທີ່ຂຽນພຣະທັມປັນຍາຈານ.ຄຳຖາມທັງຫຼາຍນັ້ນດີ: ເພາະຄຳຖາມເຫຼົ່ານັ້ນມັນບັງຄັບໃຫ້ພວກເຮົາລົ້ມລຸກຄຸກຄານກັບຄວາມທ້າທາຍອັນສັບສົນຂອງຊີວິດ. ແຕ່ວ່າ, ສິ່ງຍິ່ງໃຫຍ່ທີ່ສຸດຄື, ພວກເຮົາຖືກສ້າງຂຶ້ນມາສຳລັບຄຳຕອບ. ພວກເຮົາຊອກຫາທາງແກ້ໄຂບັນຫາ. **ຈົບເລື່ອງແລ້ວ ໄດ້ຟັງກັນທັງໝົດແລ້ວ**, ມີຫຍັງຕໍ່ໄປອີກ? ແມ່ນຫຍັງຄືຄຳຕອບຂອງຄຳຖາມຊຶ່ງກ່ຽວກັບຄວາມໝາຍຂອງຊີວິດ?

ສລຸບໄດ້ວ່າຕ້ອງຢ້ານກົວພຣະເຈົ້າ, ເພື່ອການປ່ຽນທິດທາງແລະເພື່ອນັບຖືພຣະອົງ, ແລະຫຼັງຈາກນັ້ນຕ້ອງຖືຮັກສາຂໍ້ບັນຍັດທັງໝົດຂອງພຣະອົງ. ຢ້ານກົວບໍ່ໄດ້ໝາຍເຖິງການຊອກສິ່ງມາປົກບັງຕົວເອງໄວ້ຈາກພຣະພັກຂອງພຣະອົງ, ຊຶ່ງຢ້ານແມ້ກະທັ້ງການຈະເຂົ້າຫາພຣະອົງ.

ແມ່ນຫຍັງຄືການຢ້ານກົວອັນຖືກຕ້ອງທີ່ທ່ານມີຢູ່? ມັນຊ່ວຍສະແດງໃຫ້ເຫັນການຢ້ານກົວອັນຖືກຕ້ອງຕໍ່ພຣະເຈົ້າຢ່າງໃດ? ການຢ້ານກົວທີ່ຖືກຕ້ອງໝາຍເຖິງການສຳນຶກອອກເຖິງຈຸດໃນຄວາມສຳພັນທີ່ມີກັບພຣະອົງ (ປັນຍາຈານ 5:1-2). ຂນະທີ່ພຣະເຈົ້າຊອກຫາທາງທີ່ຈະເປັນບິດາຂອງທຸກໆຄົນ, ການໃກ້ຊິດແນວນີ້ຕ້ອງຄຽງຄູ່ກັນກັບການນັບຖືອັນເລິກຊຶ້ງແທ້ຈິງ.

ໃນຖານະເປັນມະນຸດ, ພວກເຮົາຊອກຫາຄວາມໝາຍໃນຊີວິດແລະພຣະເຈົ້າກໍປະທານໃຫ້ພວກເຮົາ ,ບໍ່ແມ່ນໂດຍການຍົກພວກເຮົາຂຶ້ນເກີນຕຳແໜ່ງ, ແຕ່ວ່າໂດຍການສະແດງໃຫ້ພວກເຮົາເຫັນຈຸດຢືນແທ້ຂອງພວກເຮົາໃນໂລກຂອງພຣະອົງ. ຄວາມນັບຖືຂອງພວກເຮົາຕໍ່ພຣະເຈົ້ານຳພວກເຮົາໃຫ້ຍອມເຊື່ອຟັງແລະຝຶກຝົນການສິດສອນແລະຫຼັກສິນທັມທີ່ພວກເຮົາໄດ້ຮັບຈາກພຣະອົງ.

ການມີສະຕິຍຶດໝັ້ນໃນຄວາມຮູ້ຈັກຕໍ່ການນັບຖືກໍ**ເພາະວ່ານີ້ແມ່ນສຳລັບມະນຸດຊາດທັງໝົດ**; ຫຼືເວົ້າຕົງໆວ່າ "ອັນນີ້ແມ່ນສຳລັບໝົດທັງຕົວມະນຸດ" ຄວາມໝາຍກໍຄືວ່າການນັບຖືຕໍ່ພຣະເຈົ້າແລະເຊື່ອຟັງພຣະອົງເຮັດໃຫ້ພວກເຮົາເປັນຄົນທີ່ຫຼອນໜ້າທີ່, ໃນທາງກົງກັນຂ້າມກັບສິ່ງທີ່ອະນິຈັງທີ່ໄດ້ພັນລະນາໃນພຣະທັມປັນຍາຈານທັງໝົດເຫຼັ້ມ. ພວກເຮົາຖືກສ້າງຂຶ້ນສຳລັບການນະມັສການແລະເປັນສາວົກ. ນອກຈາກສອງຢ່າງນີ້ຊີວິດນີ້ບໍ່ມີຄວາມໝາຍ.

ຂໍ້ຄວາມໃນຕອນຈົບຂອງພຣະທັມປັນຍາຈານບໍ່ແມ່ນ,"ທຸກສິ່ງຢ່າງໄຮ້ສາລະ"ແຕ່ແມ່ນ"ທຸກສິ່ງຢ່າງເປັນເລື່ອງສຳຄັນ" ມັນຈຶ່ງເປັນການຍາກໃນການຊອກຫາຄວາມໝາຍຂອງຊີວິດ. ພຣະເຈົ້າຈະພິພາກສາການກະທຳທຸກຢ່າງ. ຖ້າຂາດການຊອກຫາ ແລະບໍ່ໄດ້ເຂົ້າສ່ວນໃນເປົ້າໝາຍອັນຍິ່ງໃຫຍ່ທີ່ດຳຣົງຢູ່-ຄືຕົວຂອງພຣະຄຣິດເອງ-ຜົນທີ່ຈະໄດ້ຮັບໃນການຖືກໂທດແມ່ນບໍ່ມີຄວາມຊົມຊື່ນຍິນດີແລະບໍ່ມີຄວາມຫວັງ. ຖ້າຫ່າງຈາກພຣະຄຣິດ, ພວກເຮົາກໍຈະເປັນເໝືອນຄຳຂວັນຂອງຊາວອີຕາລຽນທີ່ຕິດໄວ້ທີ່ປະຕູໄປສູ່ນາຣົກ"ພວກທີ່ຈະເຂົ້າທາງນີ້, ປະຄວາມຫວັງໄວ້ນີ້"

# ບົດຮຽນຊີວິດ

ຄວາມໝາຍຂອງຊີວິດບໍ່ໄດ້ຂຽນໄວ້ໃນແຜ່ນເງິນແລ້ວຍື່ນໃຫ້ແກ່ພວກເຮົາ. ຄົນສ່ວນຫຼາຍຈະຊອກບໍ່ພົບໃນໂລກທີ່ຫາຄວາມຈິງບໍ່ໄດ້ເພາະວ່າພວກເຂົາຊອກຫາມັນບໍ່ຖືກບ່ອນ, ດັ່ງເຊັ່ນບ່ອນທີ່ມີຊື່ສຽງດັງດັງຫຼືບ່ອນປະສົບຜົນສຳເລັດຢ່າງຊາວໂລກ. ຄຳຕອບພົບໃນການນັບຖືພຣະເຈົ້າ, ມັນເປັນບ່ອນເລີ້ມຕົ້ນຂອງສະຕິປັນຍາ.

ການຖາມຄຳຖາມທີ່ໂຊໂລໂມນໄດ້ຕັ້ງເອົາໄວ້, ແລະຕອບຄຳຖາມເຫຼົ່ານັ້ນໃນແສງສວ່າງຂອງພຣະທັມຂອງພຣະເຈົ້າ, ສະແດງໃຫ້ເຫັນວ່າພຣະເຈົ້າເປັນແຫຼ່ງທີ່ມາແຫ່ງຄວາມໝາຍຂອງຊີວິດ.

- ພວກເຮົາຈະໄດ້ຫຍັງເພີ້ມໃນກິຈການງານຝ່າຍໂລກນີ້? ພວກເຮົາບໍ່ໄດ້ຫຍັງເພີ້ມນອກຈາກພວກເຮົາເຮັດວຽກນັ້ນເພື່ອພຣະອົງ.
- ມີຫຍັງແດ່ທີ່ຍືນຍົງຕລອດໄປເປັນນິດ? ມີສອງຢ່າງເທົ່ານັ້ນທີ່ຍືນຍົງຕລອດໄປເປັນນິດເພາະວ່າພຣະເຈົ້າ: ພຣະທັມທີ່ພຣະອົງໄດ້ປະທານໃຫ້ແລະຄົນທີ່ພຣະອົງໄດ້ຊົງສ້າງຂຶ້ນ.
- ມີສິ່ງທີ່ເຄີຍປ່ຽນແປງແທ້ຫຼື? ມັນເຄີຍມີແທ້, ແຕ່ວ່າກໍເພາະພຣະເຈົ້າແລະໃນຣິດອຳນາດຂອງພຣະອົງເທົ່ານັ້ນ.
- ບ່ອນໃດທີ່ພວກເຮົາສາມາດພົບຄວາມຄົບເຕັມ, ບາງຢ່າງທີ່ເຮັດໃຫ້ເຂົ້າໃຈຊີວິດແລະໃຫ້ຄວາມໝາຍຂອງມັນ? ພວກເຮົາພົບມັນໃນການຮັກແລະຍອມເຊື່ອຟັງຄວາມນັບຖືພຣະເຈົ້າ.
- ຊີວິດແລະປວັດສາດເຄື່ອນທີ່ໄປທາງໃດບໍ່? ແມ່ນແລ້ວ, ມັນຈະໄປເຖິງການພິພາກສາຄັ້ງສຸດທ້າຍ, ຊຶ່ງພວກເຮົາຕ້ອງຕຽມພ້ອມໂດຍຜ່ານການໄວ້ວາງໃຈໃນພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PA**